**ເພີດເພີນກັບດອກເບ້ຍ 0% ໂດຍການຈ່າຍຊຳລະແບບ Flexipay ດ້ວຍບັດວີຊ່າ ເຄຣດິດ ຂອງທະນາຄານ ພາບລິກ ລາວ**

**<u>ຂໍ້ກຳນົດ ແລະ ເງື່ອນໄຂ</u>**

**Enjoy 0% with PBLL Visa Credit Card Flexipay**
**Terms & Conditions**

1. ໄລຍະເວລາໂປຣໂມຊັ່ນເລີ່ມແຕ່ **17 ກຸມພາ 2026** ຈົນເຖິງ **30 ມິຖຸນາ 2026**.
   The Promotion is valid from **17 February 2026** until **30 June 2026** (the "Promotion Period").

2. ໂປຣໂມຊັ່ນນີ້ແມ່ນເໝາະສຳຫຼັບ ສະມາຊິກຜູ້ຖືບັດວີຊ່າ ເຄຣດິດ ຂອງທະນາຄານ ພາບລິກ ລາວ ຈຳກັດ ("ສະມາຊິກຜູ້ຖືບັດທຸກທ່ານ ມີສິດເຂົ້າຮ່ວມ")
   This Promotion is open to all Public Bank Lao Limited (PBLL) Visa Credit Cardmembers ("Eligible Cardmembers").

3. ສະມາຊິກຜູ້ຖືບັດ ສາມາດປ່ຽນລາຍການນຳໃຊ້ບັດຂອງຕົນໃຫ້ເປັນການຈ່າຍຜ່ອນຊຳລະແບບ Flexipay ໄດ້ດັ່ງຕໍ່ໄປນີ້:
   Eligible Cardmembers can convert their purchase transactions into Flexipay Plan as follows:

<table>
<tr><th>ຈຳນວນເງິນຂັ້ນຕ່ຳ<br>Minimum Amount</th><th>ໄລຍະເວລາ<br>Tenure</th><th>ສະກຸນເງິນຂອງທຸລະກຳ<br>Transaction Currency</th><th>ດອກເບ້ຍ<br>Interest</th><th>ຄ່າທຳນຽມ<br>Upfront Fee</th></tr>
<tr><td rowspan="5">≥LAK 1,500,000</td><td rowspan="2">6 ເດືອນ / months</td><td>Forign currency / ສະກຸນເງິນຕາ</td><td>0%</td><td>0%</td></tr>
<tr><td>Lao Kip / ສະກຸນເງິນກີບ</td><td>0%</td><td>1%</td></tr>
<tr><td rowspan="2">8 ເດືອນ / months<br>*(ສິດທິພິເສດສະເພາະໃນເດືອນເກີດ/ Birthday Month Special)</td><td>Forign currency / ສະກຸນເງິນຕາ</td><td>0%</td><td>0%</td></tr>
<tr><td>Lao Kip / ສະກຸນເງິນກີບ</td><td>0%</td><td>2%</td></tr>
<tr><td>1 ປີ / years</td><td>All currencies / ທຸກສະກຸນເງິນ</td><td>0%</td><td>3%</td></tr>
<tr><td>ວົງເງິນການນຳໃຊ້<br>Flex Payment Plan Limit</td><td colspan="4">ສາມາດປ່ຽນລາຍການນຳໃຊ້ບັດ ໃຫ້ເປັນການຈ່າຍຜ່ອນຊຳລະໄດ້ສູງສຸດເຖິງ 50% ຂອງວົງເງິນບັດເຄຣດິດ.<br>Cardmembers can convert their purchase transactions into Flexipay Plan up to 50% of credit card limit.</td></tr>
</table>

4. ສະມາຊິກຜູ້ຖືບັດຈະຕ້ອງແຈ້ງໃຫ້ ທະນາຄານ ພາບລິກ ລາວ ຈຳກັດ ຮັບຊາບໂດຍການໂທແຈ້ງສູນບັດຂອງທະນາຄານ ໝາຍເລກໂທລະສັບ 021-262188, ຫຼື ສົ່ງອີເມວໄປທີ່ laosccd@publicbank.com.la ບອກລາຍລະອຽດຂອງລາຍການຊື້ສິນຄ້າທີ່ຕ້ອງການຜ່ອນຊຳລະໃນຮູບແບບ Flexipay ນອກຈາກນັ້ນ ຍັງສາມາດແຈ້ງໃຫ້ທະນາຄານ ຮັບຊາບຕື່ມພາຍຫຼັງເຮັດລາຍການຊື້ສິນຄ້າສຳເລັດ ແຕ່ຕ້ອງແຈ້ງກ່ອນວັນອອກໃບແຈ້ງຍອດໜີ້ໃນຄັ້ງຖັດໄປຢ່າງໜ້ອຍ 5 ວັນ. ທະນາຄານ ພາບລິກ ລາວ ຈຳກັດ ຂໍສະຫງວນສິດໃນການປະຕິເສດ ຕໍ່ການຮ້ອງຂໍຂອງສະມາຊິກຜູ້ຖືບັດ ໄດ້ຕາມການພິຈາລະນາ ໂດຍບໍ່ຈຳເປັນຕ້ອງແຈ້ງເຫດຜົນໃດໆແກ່ສະມາຊິກຜູ້ຖືບັດ
   .
   The Eligible Cardmember must inform PBLL by calling the Card Centre Department of PBLL at 021-262188, emailing to PBLL at laosccd@publicbank.com.la. The details of the purchase which the Eligible Cardmember intends to pay by instalments under the Flexipay can be made known to PBLL after the purchase transaction is made and 5 days before the next statement date. PBLL reserves the right to reject the application at its absolute discretion without having to assign any reason whatsoever to the Eligible Cardmember.

5. Flexipay ບໍ່ສາມາດໃຊ້ເປັນເງິນສົດ ແລະ ບໍ່ສາມາດໃຊ້ກັບທຸລະກຳທີ່ເປັນເງິນສົດໄດ້ ລວມທັງການຈ່າຍຊຳລະຕໍ່ການຜ່ອນຊຳລະຕ່າງໆຂອງ ທະນາຄານ ພາບລິກ ລາວ ຫຼື ທະນາຄານ ແລະ ສະຖາບັນການເງິນອື່ນໆ, ບໍ່ວ່າຈະເປັນການໂອນຊຳລະຄ່າງວດເງິນກູ້ ແລະ ການຊຳລະຄ່າທຳນຽມປະຈຳປີ, ຍອດໜີ້ຕ່າງໆ ຫຼື ຄ່າທຳນຽມອື່ນໆ ທີ່ທະນາຄານ ໄດ້ຮຽກເກັບພາຍໃຕ້ ເງື່ອນໄຂ ຫຼື ຂໍ້ຕົກລົງໃດໆກໍຕາມ ແມ່ນບໍ່ສາມາດນຳໃຊ້ໄດ້.
   Flexipay is not available as cash and is not applicable to cash transactions, any payment of instalments under other instalment payment schemes provided by PBLL or any other bank or financial institution, payment of instalments under balance transfer and settlement of any annual fee, outstanding balances or charges imposed by PBLL under and/or pursuant to the terms of the Cardmember Agreement.

6. ໃນການເຂົ້າຮ່ວມໂປຣໂມຊັ່ນນີ້, ຍອດຊື້ສິນຄ້າຂັ້ນຕ່ຳ ຕ້ອງບໍ່ໜ້ອຍກວ່າ 1,500,000 ກີບ. ຍອດຈຳກັດການຊື້ສິນຄ້າອາດຈະມີການປ່ຽນແປງເປັນບາງຄັ້ງຄາວຕາມການພິຈາລະນາຂອງ ທະນາຄານ ພາບລິກ ລາວ ຈາກັດ.
   To qualify for the Promotion, the minimum amount of a purchase must be at least LAK1,500,000. The qualifying purchase limits may be varied from time to time at PBLL absolute discretion

7. ພາຍໃຕ້ການອະນຸມັດຂອງ ທະນາຄານ ພາບລິກ ລາວ ຈຳກັດ, ລາຍການຊື້ສິນຄ້າທີ່ບໍ່ຂັດແຍ່ງ ຕໍ່ຂໍ້ກຳນົດໃດໆ ແລະ ຖືກຕ້ອງຕາມເງື່ອນໄຂແມ່ນສາມາດຈ່າຍຊຳລະເປັນງວດພາຍໃຕ້ຮູບແບບ Flexipay ຖ້າວ່າ: -
   Subject to PBLL’s approval, a purchase not precluded by any terms herein can be settled by instalments under the Flexipay if: -

a) ລາຍການຊື້ສິນຄ້າທີ່ສະແດງໃນໃບແຈ້ງຍອດໜີ້ປະຈຳເດືອນ ຈະເຫັນຢູ່ໃນສ່ວນຂອງຍອດໜີ້ປັດຈຸບັນທີ່ຕ້ອງຊຳລະ, ແຕ່ຍັງບໍ່ກາຍວັນອອກໃບແຈ້ງຍອດໜີ້ຂອງເດືອນຖັດໄປ ໃນເວລາທີ່ລາຍການຊື້ສິນຄ້ານັ້ນຖືກປ່ຽນເປັນການຈ່າຍຜ່ອນຊຳລະແບບ Flexipay ແລ້ວ. ເພື່ອໃຫ້ເຫັນພາບຊັດເຈນ ຂໍຍົກຕົວຢ່າງດັ່ງນີ້: -

The purchase transaction is reflected in the current monthly statement as part of the Current Balance due but has not passed the next monthly statement date at the time the purchase is converted into Flexipay Instalment. To illustrate with an example: -

- ວັນອອກໃບແຈ້ງຍອດຄືວັນທີ 16 ກຸມພາ 2026.

  The statement date is 16 February 2026.
- ວັນທີ່ເຮັດລາຍການຊື້ຄືວັນທີ 18 ກຸມພາ 2026.

  The purchase transaction date is 18 February 2026.
- ສະມາຊິກຜູ້ຖືບັດຕ້ອງແຈ້ງໃຫ້ ທະນາຄານພາບລິກ ລາວ ຮັບຊາບວ່າ ທ່ານຕ້ອງການຈະສະໝັກນຳໃຊ້ການຊຳລະແບບ Flexipay ໃນລະຫວ່າງວັນທີ 20 ກຸມພາ ເຖິງ 11 ມີນາ 2026, ກ່ອນວັນອອກໃບແຈ້ງຍອດຂອງເດືອນຖັດໄປ (ກະລຸນາເພື່ອເວລາ 5 ວັນໃນການບັນທຶກລາຍການ).

  The Eligible Cardmember must inform PBLL that he/she wishes to apply for Flexipay between 20 February to 11 March 2026, before the next statement date (please allow 5 days for the transaction to be posted).
- ການຊຳລະເງິນແມ່ນຈະປ່ຽນເປັນການຜ່ອນຊຳລະແບບ Flexipay ກ່ອນວັນທີ 16 ມີນາ 2026 (ເຊິ່ງເປັນວັນອອກໃບແຈ້ງຍອດຄັ້ງຖັດໄປ).

  The payment can only be converted to Flexipay Instalments before 16 March 2026 (the next statement date).

8. ການຜ່ອນຊຳລະແບບ Flexipay ຈະຄຳນວນຕາມສູດດັ່ງຕໍ່ໄປນີ້: -

   The Flexipay Instalment is computed based on the following formula: -

$$\text{Flexipay Instalment / ງວດຈ່າຍຊຳລະ} = \frac{\text{Flexipay Amount / ຈຳນວນເງິນ}}{\text{Flexipay Tenure / ໄລຍະເວລາ}}$$

9. ເມື່ອທະນາຄານ ພາບລິກ ລາວ ອະນຸມັດຄຳຂໍສະໝັກ Flexipay ຂອງສະມາຊິກກຜູ້ຖືບັດແລ້ວ, ວົງເງິນເຄຣດິດໃນບັນຊີບັດຂອງສະມາຊິກກຜູ້ຖືບັດ ແມ່ນຈະຫຼຸດລົງຕາມຈຳນວນຍອດລວມຂອງການຈ່າຍຜ່ອນຊຳລະໃນແຕ່ລະເດືອນຂອງ Flexipay. ເມື່ອສະມາຊິກກຜູ້ຖືບັດຈ່າຍຊຳລະງວດໃນແຕ່ລະເດືອນຂອງ Flexipay ແລ້ວ, ຈຳນວນເງິນທີ່ຜ່ອນຊຳລະໃນແຕ່ລະເດືອນນັ້ນຈະກັບຄືນເຂົ້າໄປເພີ່ມໃນວົງເງິນເຄຣດິດ ຂອງສະມາຊິກກຜູ້ຖືບັດ.

   Upon PBLL's approval of the Eligible Cardmember's application for the Flexipay, the credit limit of the Eligible Cardmember's Card Account will be reduced by the aggregate amount of the outstanding Flexipay Monthly Instalments due. As each Flexipay Monthly Instalment is repaid/paid by the Eligible Cardmember, the amount equivalent to the Flexipay Monthly Instalment so repaid/paid shall be restored to the Eligible Cardmember's credit limit.

10. ຍອດຜ່ອນຊຳລະລາຍເດືອນຂອງ Flexipay ຈະເລີ່ມຮຽກເກັບຈາກສະມາຊິກຜູ້ຖືບັດ ໃນວັນຖັດໄປຂອງມື້ທີ່ທະນາຄານ ພາບລິກ ລາວ ໄດ້ອະນຸມັດຄຳຂໍ ແລະ ຈະຖືກຮຽກເກັບໃນທຸກເດືອນຫຼັງຈາກນັ້ນ ຈົນກວ່າຈະຊຳລະຄົບເຕັມຈຳນວນທັງໝົດຂອງການຈ່າຍຊຳລະແບບ Flexipay.
The Flexipay Monthly Instalment shall be billed to the Eligible Cardmember on the date following PBLL's approval of the application and every month thereafter until full settlement of all the Flexipay Monthly.

11. ສະມາຊິກຜູ້ຖືບັດ ສາມາດຊຳລະເງິນເຕັມຈຳນວນຂອງຍອດຜ່ອນຊຳລະລາຍເດືອນທັງໝົດ ໂດຍການຈ່າຍຊຳລະເຂົ້າບັນຊີບັດເຄຣດິດຂອງສະມາຊິກຜູ້ຖືບັດ. ອັດຕາຄ່າທຳນຽມ / ຄ່າບໍລິຫານຕາມມາດຕະຖານແມ່ນ 18% ຕໍ່ປີ ຈະຖືກຮຽກເກັບຈາກຍອດຄ້າງຊຳລະ ແລະ/ຫຼື ຍອດຜ່ອນຊຳລະລາຍເດືອນທີ່ຍັງບໍ່ໄດ້ຊຳລະເຕັມຈຳນວນ.
The Eligible Cardmember will have to make full payment for the monthly instalment amount debited to the Eligible Cardmember's Card Account. The standard tiered Finance Charge/Management Fee of 18% per annum will be levied on the overdue amount and/or outstanding monthly instalment not paid in full.

12. ຖ້າວ່າບໍ່ມີການຊຳລະຍອດຂັ້ນຕ່ຳ ພາຍໃນມື້ທີ່ກຳນົດຈ່າຍ ຈະມີການຮຽກເກັບຄ່າທຳນຽມໃນການຊຳລະຊ້າ 5% ຂອງຍອດຕ່ຳສຸດ ຫຼື ຂັ້ນຕ່ຳ 100,000 ກີບ ຫຼືອາດຈະຫຼາຍກ່ວາ. ຫຼັງຈາກສິ້ນສຸດໄລຍະໂປຣໂມຊັ່ນຜ່ອນຊຳລະແມ່ນຈະມີການຄິດໄລ່ຄ່າທຳນຽມ /ຄ່າບໍລິຫານຕາມປົກກະຕິໃນອັດຕາ 18% ຕໍ່ປີ.
If the minimum payment is not paid by the Due Date, the standard late charges of 5% of the total minimum outstanding balance as at statement date or a minimum of LAK100,000, whichever is higher will be chargeable. After the credit scheme duration, the standard tiered Finance Charge/Management Fee of 18% per annum will be applicable.

13. ສະມາຊິກຜູ້ຖືບັດ ສາມາດສະໝັກນຳໃຊ້ບໍລິການ ຜ່ອນຊຳລະແບບ Flexipay ໄດ້ຫຼາຍກວ່າໜຶ່ງທຸລະກຳ ໂດຍຂຶ້ນກັບຄຸນສົມບັດຂອງສະມາຊິກຜູ້ຖືບັດ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂທີ່ໄດ້ລະບຸໄວ້. ທຸກລາຍການການຊື້ສິນຄ້າ ທີ່ປ່ຽນມາເປັນການຜ່ອນຊຳລະ ແມ່ນໄດ້ຮັບຊາບ ແລະ ເຫັນດີຈາກສະມາຊິກຜູ້ຖືບັດແລ້ວ.
The Eligible Cardmember may apply for Flexipay more than once subject to the Eligible Cardmember's eligibility based on the Terms and Conditions herein contained. All converted payment of purchases is deemed to be final and as agreed by the Eligible Cardmember.

14. ເຫດການດັ່ງຕໍ່ໄປນີ້ ແຕ່ລະຂໍ້ຈະຖືກພິຈາລະນາເປັນການຜິດນັດຊຳລະໜີ້ ເມື່ອເກີດເຫດການດັ່ງກ່າວຂຶ້ນ ຍອດຄ່າໃຊ້ຈ່າຍທັງໝົດ ແລະ/ຫຼື ຍອດຜ່ອນຊຳລະລາຍເດືອນຂອງ Flexipay ລວມເຖິງຍອດທັງໝົດທີ່ຄ້າງຊຳລະຈະກາຍເປັນຍອດໜີ້ທີ່ຕ້ອງຊຳລະທັນທີ ແລະ ຈະບໍ່ກະທົບຕໍ່ສິດພັນທະຂອງ ທະນາຄານ ພາບລິກ ລາວ ຈຳກັດໃນການຮຽກຮ້ອງຕໍ່ການຊຳລະເງິນທັງໝົດ ຫຼື ບາງສ່ວນຂອງຍອດຄ້າງຊຳລະ ແລະ/ຫຼື ຍອດຜ່ອນຊຳລະລາຍ

ເດືອນຂອງ Flexipay ແລະ ເງິນທີ່ຄ້າງຊຳລະດັ່ງກ່າວ. ທະນາຄານ ພາບລິກ ລາວ ຈຳກັດ ມີສິດໃນການດຳເນີນການ ຕາມມາດຕະການຕ່າງໆ ດັ່ງທີ່ລະບຸໄວ້ໃນຂໍ້ຕົກລົງ ສະມາຊິກຜູ້ຖືບັດ: -

Each of the following events shall constitute an event of default where with the occurrence of such an event, all outstanding charges and/or upon Flexipay Monthly Instalments and all monies due thereunder shall immediately become due and payable by the Eligible Cardmember and without prejudice to PBLL's right to demand payment of all or any part of the outstanding charges and/or Flexipay Monthly Instalments and the monies due thereunder. PBLL's shall be entitled to exercise its remedies under the Cardmember Agreement: -

a) ຖ້າສະມາຊິກຜູ້ຖືບັດ ຜິດນັດໃນການປະຕິບັດຕາມພາລະຜູກພັນ ບໍ່ວ່າດ້ວຍເຫດຜົນໃດໆທີ່ລະບຸໄວ້ໃນທີ່ນີ້ ຫຼື ພາຍໃຕ້ຂອງຕົກລົງຂອງສະມາຊິກຜູ້ຖືບັດ;

   If the Eligible Cardmember defaults in any of his/her obligations stated herein or under the Cardmember Agreement

b) ຖ້າມີການຜິດນັດ ຊຳລະຄ່າດອກເບ້ຍ/ຄ່າທຳນຽມດຳເນີນການຂອງ Flexipay ແລະ/ຫຼື ຍອດຜ່ອນຊຳລະລາຍເດືອນຂອງ Flexipay ຫຼື ເງິນໃດໆທີ່ຄ້າງຊຳລະຕາມບັນຊີ ຫຼື ພາຍໃຕ້ບັນຊີບັດ;

   If default is made in the payment of the Flexipay interest charges/management fees and/or Flexipay Monthly Instalment or any sums due thereunder or under the Account;

c) ຖ້າໂປຣແກຣມ Flexipay ຖືກຍຸດຕິ;

   If the Flexipay shall be terminated

d) ຖ້າຂໍ້ກຳນົດ ແລະ ເງື່ອນໄຂ ໃນເອກະສານສະບັບນີ້ ຫຼື ຂໍ້ໃດຂໍ້ໜຶ່ງ ດ້ວຍເຫດຜົນໃດໆກໍ່ຕາມສິ້ນສຸດລົງ ຜົນບັງຄັບໃຊ້ຕ່າງໆແມ່ນຈະບໍ່ມີຜົນ ຫຼື ຖືກປະກາດໃຫ້ເປັນໂມຄະ ຫຼື ຖືກຍົກເລີກ.

   If terms and conditions herein or any part hereof shall at any time for any reason cease to be in full force and effect or valid or shall be declared void repudiated or frustrated;

e) ຖ້າເກີດສະພາບການຂັດຕໍ່ກົດລະບຽບທີ່ເຮັດໃຫ້ ທະນາຄານ ພາບລິກ ລາວ ຈຳກັດ ບໍ່ສາມາດໃຫ້ບໍລິການ Flexipay ແກ່ລູກຄ້ານັ້ນໄດ້ ທະນາຄານຈະຈັດການ ຫຼື ສືບຕໍ່ໃຫ້ບໍລິການ Flexipay ແກ່ສະມາຊິກຜູ້ຖືບັດທີ່ມີຄຸນນະສົມບັດເໝາະສົມ;

   If it becomes impossible or unlawful for PBLL to make available or continue to make available the Flexipay facility to the Eligible Cardmember;

f) ຖ້າເກີດສະຖານະການໃດໆຂຶ້ນກໍ່ຕາມ ເຊິ່ງຕາມການພິຈາລະນາຂອງ ທະນາຄານ ພາບລິກ ລາວ ຈຳກັດ ອາດຈະເຮັດໃຫ້ບໍ່ສາມາດໃຫ້ການບໍລິການ ຫຼື ດຳເນີນການໃຫ້ບໍລິການ Flexipay ຕໍ່ສະມາຊິກຜູ້ຖືບັດຕໍ່ໄປໄດ້; ແລະ

If there shall occur any circumstances of any nature which in PBLL's opinion may cause PBLL to be unable to make available or continue to make available the Flexipay facility to the Eligible Cardmember; and

g) ບັດຖືກຍົກເລີກ ຫຼື ບັນຊີຖືກປິດ.

The Card is cancelled or the Account is terminated

15. ຖ້າວ່າ ທະນາຄານ ພາບລິກ ລາວ ຈຳກັດ ບໍ່ສາມາດດຳເນີນການໂປຣໂມຊັ່ນ Flexipay ໄດ້, ເນື່ອງຈາກການປ່ຽນແປງດ້ານກົດໝາຍ ຫຼື ຂໍ້ບັງຄັບໃດໆ ເຊິ່ງເຮັດໃຫ້ເກີດມີຄ່າໃຊ້ຈ່າຍເພີ່ມເຕີມ, ຄວາມຕ້ອງການສຳຮອງເງິນທີ່ສູງຂຶ້ນ ຫຼື ການປ່ຽນແປງສະຖານະການທາງການເງິນ ຫຼື ສະພາບເສດຖະກິດ, ສະມາຊິກຜູ້ຖືບັດ ເຫັນດີທີ່ຈະຮັບຜິດຊອບຄ່າໃຊ້ຈ່າຍເພີ່ມເຕີມດັ່ງກ່າວ ໃນການສືບຕໍ່ນຳໃຊ້ບໍລິການຜ່ອນຊຳລະ Flexipay. ເພື່ອຈຸດປະສົງດັ່ງກ່າວນີ້, ທະນາຄານ ພາບລິກ ລາວ ຈຳກັດ ສາມາດພິຈາລະນາທີ່ຈະຮຽກເກັບຄ່າໃຊ້ຈ່າຍເພີ່ມເຕີມ ຈາກສະມາຊິກຜູ້ຖືບັດໄດ້ ຫຼື ປັບປ່ຽນຍອດຜ່ອນຊຳລະລາຍເດືອນຂອງ Flexipay ເພື່ອໃຫ້ສອດຄ່ອງ ກ່ອນທີ່ໄລຍະເວລາການຜ່ອນຊຳລະຂອງ Flexipay ຈະສິ້ນສຸດ.
If it becomes impractical for PBLL to maintain the Flexipay by reason of any change in law or regulations which give rise to new or additional taxes, higher reserve requirement or a significant change in the monetary situation or economic environment, the Eligible Cardmember agrees to bear such additional costs for maintaining the Flexipay. For this purpose, PBLL may at its absolute discretion either bill the Eligible Cardmember for the additional costs or correspondingly adjust the Flexipay Monthly Instalment before the Flexipay Tenure expires

16. ໂປຣແກຣມ Flexipay ມີຜົນໃຊ້ໄດ້ສະເພາະໃນຊ່ວງໄລຍະເວລາການຜ່ອນຊຳລະຂອງ Flexipay ຫຼື ຈົນກວ່າຈະເຖິງວັນທີ່ກຳນົດ ໂດຍທະນາຄານ ອາດຈະມີການຂະຫຍາຍເວລາເພີ່ມໄດ້. ຢ່າງໃດກໍຕາມ ຂໍ້ກຳນົດທີ່ລະບຸໄວ້ໃນທີ່ນີ້ແມ່ນຖືເປັນການກຳນົດພັນທະໃຫ້ທະນາຄານ ພາບລິກ ລາວ ຈຳກັດ ສາມາດຂະຫຍາຍເວລາການຜ່ອນຊຳລະຂອງ Flexipay ແລະ ທະນາຄານຈະບໍ່ຮັບຜິດຊອບຕໍ່ການຮຽກຮ້ອງ, ຄວາມເສຍຫາຍ, ຄ່າໃຊ້ຈ່າຍ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນທີ່ສະມາຊິກຜູ້ຖືບັດອາດຈະໄດ້ຮັບ ຫຼື ເກີດຂຶ້ນຈາກການເຂົ້າຮ່ວມໂປຣແກຣມ Flexipay.
The Flexipay is valid only up to the Flexipay Tenure or such other date as may be extended by PBLL. Noting herein contained shall be construed as imposing an obligation on PBLL to extend the Flexipay Tenure and PBLL disclaims all liabilities in respect of any actions, claims, damages, costs, charges and expenses which the Eligible Cardmember may suffer, sustain or incur by reason of his/her participation in the Flexipay.

17. ທະນາຄານ ພາບລິກ ລາວ ຈຳກັດ ຈະບໍ່ຮັບຜິດຊອບຕໍ່ສິນຄ້າທີ່ບໍ່ຄົບຖ້ວນ, ເສຍຫາຍ ຫຼື ເປ່ເພ ທີ່ກ່ຽວກັບຂໍ້ຜິດພາດໃດໆ ລະຫວ່າງ ສະມາຊິກຜູ້ຖືບັດກັບຮ້ານຄ້າ. ສະມາຊິກຜູ້ຖືບັດຈະຕ້ອງຈ່າຍຊຳລະເງິນຜ່ອນລາຍເດືອນຂອງ Flexipay ຕາມທີ່ກຳນົດໄວ້ໃນຂໍ້ກຳນົດສະບັບນີ້ທຸກກໍລະນີ.

PBLL shall not be responsible for any inadequate, damaged or defective merchandise or be concerned with any dispute between the Eligible Cardmember and the merchants. The Eligible Cardmember must at all times pay the Flexipay Monthly Instalments as prescribed by the terms herein.

18. ບໍ່ວ່າຈະເກີດເຫດການຜິດພາດເກີດຂຶ້ນ ຫຼື ບໍ່ກໍຕາມ, ທະນາຄານ ພາບລິກ ລາວ ຈໍາກັດ ມີສິດພິຈາລະນາຢ່າງເດັດຂາດໃນການຍຸດຕິ ການໃຫ້ບໍລິການ Flexipay ແກ່ສະມາຊິກຜູ້ຖືບັດໄດ້ຕະຫຼອດເວລາ ເຊິ່ງເມື່ອມີການຢຸດຕິດັ່ງກ່າວຍອດຜ່ອນຊໍາລະລາຍເດືອນຂອງ Flexipay ທັງໝົດທີ່ຄ້າງຊໍາລະຢູ່ ຈະຖືວ່າຕ້ອງໄດ້ຊໍາລະທັນທີ ເມື່ອທະນາຄານ ມີການແຈ້ງເປັນລາຍລັກອັກສອນ ໃຫ້ແກ່ສະມາຊິກຜູ້ຖືບັດ. ຍອດຜ່ອນຊໍາລະລາຍເດືອນຂອງ Flexipay ທີ່ຄ້າງຊໍາລະທັງໝົດ ຈະຖືກສະແດງໃນໃບແຈ້ງຍອດບັນຊີລາຍເດືອນ ແລະ ສະມາຊິກຜູ້ຖືບັດຈະຕ້ອງໄດ້ຊໍາລະຕາມຂໍ້ກໍານົດທີ່ລະບຸໄວ້ໃນຂໍ້ຕົກລົງຂອງສະມາຊິກຜູ້ຖືບັດ ຖ້າຫາກບໍ່ປະຕິບັດຕາມ, ທະນາຄານ ມີສິດດໍາເນີນການຕາມຂໍ້ຕົກລົງທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະມາຊິກຜູ້ຖືບັດ.

Regardless of whether an event of default has occurred, PBLL shall be entitled at its absolute discretion at any time to terminate the Flexipay facility made available to the Eligible Cardmember whereupon all outstanding Flexipay Monthly Instalments shall immediately become due and payable upon PBLL demand of the same by notice in writing to the Eligible Cardmember. All such outstanding Flexipay Monthly Instalments will be shown in the monthly statement and the Eligible Cardmember shall pay the same in accordance with provisions of the Cardmember Agreement in default of which, PBLL shall be entitled to exercise its right under the Cardmember Agreement

## <u>ຂໍ້ກໍານົດ ແລະ ເງື່ອນໄຂທົ່ວໄປ / General Terms and Conditions</u>

1. ໂດຍການເຂົ້າຮ່ວມໂປຣໂມຊັ່ນ, ສະມາຊິກຜູ້ຖືບັດ ຈະຖືວ່າໄດ້ອ່ານ, ທໍາຄວາມເຂົ້າໃຈ ແລະ ເຫັນດີທີ່ຈະປະຕິບັດຕາມຂໍ້ກໍານົດ ແລະ ເງື່ອນໄຂທີ່ລະບຸໄວ້ໃນສະບັບນີ້ແລ້ວ. ການຕັດສິນໃຈຂອງທະນາຄານຖືວ່າເປັນທີ່ສິ້ນສຸດ, ມີຜົນພູກພັນ ແລະ ເດັດຂາດ. ຈະບໍ່ມີການຕອບໂຕ້ ຫຼື ການອຸທອນໃດໆທັງນັ້ນ. ນອກຈາກນີ້ ທະນາຄານຂໍສະຫງວນສິດແຕ່ພຽງຜູ້ດຽວໃນການປ່ຽນແປງ, ແກ້ໄຂ, ລຶບລ້າງ ຫຼື ເພີ່ມເຕີມຂໍ້ກໍານົດ ແລະ ເງື່ອນໄຂເຫຼົ່ານີ້ ໂດຍບໍ່ຈໍາເປັນຕ້ອງແຈ້ງໃຫ້ຊາບລ່ວງໜ້າ.

   By participating in the Promotion, the Eligible Cardmember shall be deemed to have read, understood and agreed to be bound by the Terms and Conditions stated herein. The decision of the Bank shall be final, binding and conclusive. No correspondence, disputes and appeals will be entertained. The Bank further reserves the exclusive right to change, amend, delete or add on to these Terms and Conditions from time to time without prior notice.

2. ຖ້າມີຄຳຖາມຫຼືຂໍ້ສົງໄສໃດໆກ່ຽວກັບໂປຣໂມຊັ່ນ, ກະລຸນາຕິດຕໍ່ຫາສູນບັດຂອງ ທະນາຄານ ພາບລິກ ລາວ ຈຳກັດ ໄດ້ທີ່ໝາຍເລກ 021 262188.

   Any questions or queries on the Promotion, must be referred to PBLL Card Centre at 021 262188.

3. ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມສູນເສຍ ຫຼື ຄວາມເສຍຫາຍໂດຍກົງ ຫຼື ໂດຍທາງອ້ອມໃດໆ ທີ່ສະມາຊິກຜູ້ຖືບັດໄດ້ຮັບ, ບໍ່ວ່າຈະເກີດຂຶ້ນໂດຍທາງກົງ ຫຼື ທາງອ້ອມ, ທັງໝົດ ຫຼື ບາງສ່ວນ, ອັນເນື່ອງມາຈາກການເຂົ້າຮ່ວມໂປຣໂມຊັ່ນ ຫຼື ເປັນຜົນຈາກການກະທຳ ຫຼື ການລະເວັ້ນການກະທຳໃດໆຂອງທະນາຄານ.

   The bank shall not be liable for any direct or consequential loss and damage or whatsoever suffered by the Eligible Cardmember, whether caused directly or indirectly, in whole or in part, from their participation in the Promotion or as a result of any act or omission on the part of the Bank.

4. ຂໍ້ກຳນົດ ແລະ ເງື່ອນໄຂໃນສະບັບນີ້ເປັນສ່ວນເພີ່ມເຕີມ ແລະ ບໍ່ກະທົບຕໍ່ຂໍ້ກຳນົດ ແລະ ເງື່ອນໄຂທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງຂອງສະມາຊິກຜູ້ຖືບັດ  ເຊິ່ງມີຜົນບັງຄັບໃຊ້ຕໍ່ບັນຊີບັດຂອງສະມາຊິກຜູ້ຖືບັດ.  ໃນກໍລະນີທີ່ມີຂໍ້ຂັດແຍ່ງລະຫວ່າງຂໍ້ກຳນົດ ແລະ ເງື່ອນໄຂເຫຼົ່ານີ້ກັບຂໍ້ຕົກລົງດັ່ງກ່າວ, ໃຫ້ຖືວ່າຂໍ້ກຳນົດ ແລະ ເງື່ອນໄຂເຫຼົ່ານີ້ມີຜົນຫຼາຍກວ່າ, ແຕ່ສະເພາະສ່ວນທີ່ກ່ຽວຂ້ອງກັບໂປຣໂມຊັ່ນ "ສິດທິພິເສດຜ່ອນຊຳລະ 0% ແບບ Flexipay ດ້ວຍບັດວີຊ່າເຄຣດິດຂອງ ທະນາຄານພາບລິກ" ເທົ່ານັ້ນ.

   The Terms and Conditions herein are in addition to and without prejudice to the Terms and Conditions stated in the Cardmember Agreement applicable to the Eligible Cardmember's Card Account. In the event of any inconsistency between these Terms and Conditions and the said Agreement, these Terms and Conditions shall prevail in so far as they apply to the "Enjoy 0% with PBLL Visa Flexipay" Promotion.

5. ໃນກໍລະນີທີ່ມີຄວາມຂັດແຍ່ງ, ຄວາມບໍ່ສອດຄ່ອງ ຫຼື ຄວາມແຕກຕ່າງລະຫວ່າງຂໍ້ກຳນົດ ແລະ ເງື່ອນໄຂໃນສະບັບພາສາອັງກິດ ແລະ ສະບັບພາສາລາວ, ໃຫ້ຖືວ່າຂໍ້ກຳນົດ ແລະ ເງື່ອນໄຂໃນສະບັບພາສາອັງກິດມີຜົນບັງຄັບໃຊ້ເປັນຫຼັກ.

   In the event of a conflict, discrepancy or variance in the terms and conditions in the English Language version and Lao version, the terms and conditions of the English Language version shall prevail.

**********************************